## 6) ການໃຫ້ນ້ຳເປັນໄລຍະ

ການສະໜອງນ້ຳ ໃນລະບົບກະເສດສຸມ ແບບກ້າກົບດຽວ ແມ່ນ **ບໍ່ໃຊ້ນ້ຳຫຼາຍ ພຽງແຕ່ 2 ຊມ ເພື່ອ ຮັກສາຄວາມຊຸ່ມປົກຫຸ້ມດິນປະມານ 0.5 ຊມ ເທົ່ານັ້ນ.**



ການຂັງນ້ຳ ແລະ **ປ່ອຍໃຫ້ດິນແຫ້ງ ຕາມເງື່ອນໄຂ ດິນໜຽວ ອະນຸຍາດຈົນເຖິງດິນແຕກແຫງ ຈຶ່ງໃຫ້ນ້ຳ ໃນຄັ້ງຕໍ່ໄປ (ອາດເຖິງ 18ມື້)**, **ຮອບວຽນຂັງ**ແລະລະບາຍນ້ຳ ໂດຍພື້ນຖານເທື່ອລະ5ມື້ໃນ3ອາທິດທຳອິດ ແລະ ເທື່ອລະ10ມື້ໃນຕໍ່ໄປເຖິງເຂົ້າຖອກຮວງຂັງນ້ຳເລີຍ ແລະ ຢຸດໃຫ້ນ້ຳ 2 ອາທິດກ່ອນການເກັບກ່ຽວ.

## 7) ການບົວລະບັດຮັກສາ

ໃນໄລຍະ ຂອງ ການຈະເລີນເຕີບໂຕ ທາງລຳຕົ້ນຂອງເຂົ້າ, ການເສຍຫຍ້າຂ້າຫຸ່ນຫວ່ານຝຸ່ນຈະຕ້ອງໄດ້ປະຕິບັດ **2 ຫາ 3 ເທື່ອ ດ້ວຍໃຊ້ເຄື່ອງເສຍຫຍ້າ ຊຶ່ງມີໄລຍະເວລາຫ່າງກັນ 10 ຫາ 12 ມື້ຕໍ່ເທື່ອ.**





❖ ການໃສ່ຝຸ່ນ ກ້າວໄປເຖິງການ **ຜະລິດທີ່ປອດສານພິດ(ເຄມີ)** ໂດຍນຳໃຊ້ຝຸ່ນບົ່ມ ຝຸ່ນຄອກ ແລະປ້ອງກັນການທຳລາຍ ຂອງສັດຕູພືດ ຕາມແບບວິທີການພື້ນບ້ານເຊັ່ນ: ເຮັດກັບດັກ ຫຼື ຢາພື້ນເມືອງອື່ນໆ **ແຕ່ການນຳໃຊ້ ສານເຄມີ ຈະເປັນທາງເລືອກສຸດທ້າຍເທົ່ານັ້ນ.**





☛ **ຫຼັກຕຳລາການສົ່ງເສີມສຸຂະພາບຈິດ:** 1) ຝຶກຄວບຄຸມອາລົມຕົນເອງ, 2) ສະສົມມິດ ໄມຕີ, 3) ບໍ່ຍອມລົບຫລີກອຸປະສັກໄປຢ່າງງ່າຍດາຍ, 4) ຝຶກຈິດໃຈໃຫ້ມີຄວາມໝັ້ນຄົງ ແລະ ຍຸຕິທຳ, 5) ເສີມສ້າງຄຸນຄ່າ, 6) ຫາຄວາມສະຫງົບ: ສ້າງອາລົມໃຫ້ຫ້າວຫັນ ໂດຍ ການພັກຜ່ອນ, ຫຼີ້ນກິດຈະກຳດົນຕີ, ທ່ອງທ່ຽວ, ຫຼີ້ນກິລາ, ຝຶກສະມາທິ, ປູກຝັງລ້ຽງສັດ, **ປູກເຂົ້າດຳນາກ້າກົບດຽວ** ດີແລ. **ການຈະເລີນເຕີບໂຕດີໝາຍເຖິງ ຜົນຜະລິດສູງ ເວລາເກັບກ່ຽວ**





## ໃຊ້ນ້ຳໜ້ອຍ-ປະຢັດຕົ້ນທຶນ-ໄດ້ຜົນຜະລິດສູງ





# ກະຊວງກະສິກຳ ແລະ ປ່າໄມ້

## ກົມຊົນລະປະທານ

### ໂຄງການ ຊົນລະປະທານຂະໜາດນ້ອຍ ປະຊາຊົນຄຸ້ມຄອງ

ການປູກເຂົ້າດຳນາແບບກ້າກົບດຽວ

**ສຳລັບຊົນລະກະເສດແບບຍືນຍົງ**

ສູນນາສາທິດເຂດນ້ຳຊວງ, ນຄ. ວຽງຈັນ



**Northern Community Managed Irrigation Sector Project**
**ADB Loan No. 2086-LAO (SF)**

# ການປູກເຂົ້າລະບົບກະເສດສຸມ

## (ດຳນາແບບກ້າກົບດຽວ/SRI)



**The System of Rice Intensification**
**( SRI )**

## I. ປະຫວັດຄວາມເປັນມາ

ການປູກເຂົ້າລະບົບກະເສດສຸມ **ດຳນາແບບກ້າກິບດຽວ** (SRI)ໄດ້ຄິດຄົ້ນຂຶ້ນປີ1961 ໂດຍຊ່ຽວຊານຝຣັ່ງ ຊື່ ທ່ານ ເຮັນຣີ (Fr. Henri) ແລະ ໃນປີ1980 ໄດ້ພັດທະນາ ທົດລອງຢູ່ໃນປະເທດມາດາກັດສະກາ ເຖິງປີ1997 SRI ໄດ້ຖືກນຳເຂົ້າໄປເຜີຍແຜ່ ທີ່ປະເທດອິນໂດເນເຊຍ ແລະປີ 1999 ໄດ້ທົດລອງ ຢູ່ ປະເທດ ອິນໂດເນເຊຍ, ປະເທດຈີນ ແລະ ສປປ ລາວ ໃນປີ 2006-07. ປະຈຸບັນເຕັກນິກດັ່ງກ່າວ (SRI) ໄດ້ນຳເອົາ ໄປປະຕິບັດ ຢູ່ຫຼາຍກວ່າ 25 ປະເທດ ໂດຍສະເລ່ຍສະມັດ ຕະພາບ 7 ຫາ 10 ຕ/ຮຕ.

## II. ການປູກເຂົ້າ ລະບົບກະເສດສຸມ ດຳນາແບບກ້າກິບດຽວ (SRI) ແມ່ນຫຍັງ ?

ແມ່ນ ວິທີການປູກເຂົ້າແບບໃໝ່ ທີ່ໃຫ້ຜົນຜະລິດສູງ ດ້ວຍການນຳໃຊ້ຕົ້ນທຶນຕ່ຳເຊັ່ນ: ປະຢັດນ້ຳ, ແນວພັນ, ຝຸ່ນປຸ໋ຍ ແລະ ອື່ນໆ ກ້າວໄປເຖິງການ ຜະລິດທີ່ປອດສານເຄມີ.

## III. ຫຼັກການພື້ນຖານ

- ☞ ວິທີການຕົກກ້າ ໃສ່ຖາດຢາງ ຫຼືຖາດໄມ້ໄຜ່ ໃຊ້ດິນປະສົມຝຸ່ນຄອກ 1ຕໍ່1 ໜາ 4ຫາ5 ຊມ ຮອງດ້ວຍໃບຕອງ, ຖ້າເປັນຈຳນວນຫຼາຍເຮັດຄືໜານຜັກໃຊ້ຜ້າຢາງຮອງ.
- ☞ ວິທີການ ປັກດຳ ທີ່ແຕກຕ່າງຈາກວິທີດັ້ງເດີມເຊັ່ນ:
  1) ການປັກດຳ ດ້ວຍກ້າ ທີ່ມີອາຍຸ ອ່ອນກວ່າ14 ມື້.
  2) ການປັກດຳ ດ້ວຍກ້າກິບດຽວ ຊຶ່ງໄລຍະຫ່າງທຳມະດາ 30 x 30 ຊມ ຫຼື ຫ່າງກວ່າ (ບໍ່ໃຫ້ເມັດຫຼຸດອອກ).
- ☞ ວິທີຈັດການນ້ຳ ແຕກຕ່າງຈາກວິທີດັ້ງເດີມເຊັ່ນ:
  1) ການໃຫ້ນ້ຳເປັນໄລຍະຄື:ຂັງນ້ຳ ແລະປ່ອຍດິນແຫ້ງ
  2) ສາມາດປະຢັດນ້ຳໄດ້ ປະມານ 30 - 50%.



## IV. ວິທີການຈັດຕັ້ງປະຕິບັດ

### 1) ການກຽມດິນ

ການກຽມດິນ ຕາມທຳມະດາແລ້ວ ຕ້ອງໄດ້ເຮັດ 2 ເທື່ອຄື: ພາຍຫຼັງທີ່ ໄຖຄົ້ນ-ຄາດ ແລ້ວ ຕ້ອງໄດ້ລວດ ໃຫ້ຮາບພຽງດີ (ຄືເຮົາ ກຽມດິນເພື່ອຕົກກ້າ ແບບດັ້ງເດີມ).

### 2) ການກຽມຕົກກ້າ



### 3) ການສ້າງຮ່ອງ ໃນໄຮ່ນາ ເພື່ອລະບາຍນ້ຳ






### 4) ການຂີດໝາຍ ໄລຍະປັກດຳ:

ການຂີດຄອງ ເພື່ອໃຫ້ໄດ້ໄລຍະປັກດຳ ທີ່ສະເໜີ ຕາມຄວາມຕ້ອງການ (30x30 ຊມ ຫຼື 35x35 ຊມ ຫຼື 50 x50 ຊມ) ດ້ວຍຄາດໄມ້ ແລະປັກດຳ ລຳຕົ້ນ-ຮາກເປັນຮູບສາກ ເລິກປະມານ 1 ຫາ 2 ຊມ ເທົ່ານັ້ນ.




### 5) ການປັກດຳ ດ້ວຍກ້າກິບດຽວ: ທີ່ມີອາຍຸອ່ອນກວ່າ ກ້າຕາມແບບວິທີດັ້ງເດີມ (ອາຍຸ ຂອງຕົ້ນກ້າ ທີ່ປັກດຳແມ່ນ 7 ຫາ14 ມື້)

